ຄຳແນະນຳເປັນທາງການຂອງທ່ານ

# **ຄຳແນະນຳທາງການ**ກ່ຽວກັບການ ເລືອກຕັ້ງຂອງຣັຖບານກາງ ປີ 2010

**ວັນເສົາວັນທີ 21 ເດືອນ ສິງຫາ (08) 2010**




Lao/ລາວ

AEC
Australian Electoral Commission
*Your vote is a valuable thing*

ELECTION 2010

# ມື້ເລືອກຕັ້ງຂອງຣັຖການກາງ

ມື້ເລືອກຕັ້ງແມ່ນ**ວັນເສົາວັນທີ 21 ເດືອນ ສິງຫາ 2010**

ການປ່ອນບັດເລືອກຕັ້ງແມ່ນມີຄວາມຈຳເປັນສະເພາະຊາວອອສເຕຣລຽນ ທີ່ຈົດເຂົ້າໃນບັນຊີເລືອກຕັ້ງ ອາຍຸແຕ່ 18 ປີ ຂື້ນເມືອ. ຖ້າວ່າທ່ານບໍ່ໄປລົງຄະແນນສຽງເລືອກຕັ້ງນັ້ນ ທ່ານຈະຖືກປັບໄໝ.

ສະຖານທີ່ປ່ອນບັດເລືອກຕັ້ງຈະເປີດແຕ່ **8.00 ໂມງເຊົ້າ** ແລະ ປິດ **6.00 ໂມງແລງ** ຕົງ.

ມື້ປ່ອນບັດເລືອກຕັ້ງນັ້ນ ທ່ານຈະລົງຄະແນນສຽງຢູ່**ສະຖານທີ່ປ່ອນບັດ**ໃນຣັຖ ຫຼືວ່າ ໃນເຂດປົກຄອງທີ່ຕົນຢູ່ ປ່ອນບ່ອນໃດກໍໄດ້.

**ໃນມື້ເລືອກຕັ້ງ ຖ້າວ່າ ທ່ານບໍ່ສາມາດໄປເຖິງສະຖານທີ່ປ່ອນບັດເລືອກຕັ້ງໃນຣັຖ ທີ່ຕົນຢູ່ ຫຼື ໃນເຂດປົກຄອງໄດ້ນັ້ນ** ກະຣຸນາເບິ່ງຂໍ້ມູນຢູ່ໃນໜ້າ 4 ທີ່ອະທິບາຍ ເຖິງການປ່ອນບັດວິທີຢ່າງອື່ນ.

**ເພື່ອຄວາມແນ່ໃຈວ່າ ຄະແນນສຽງຂອງທ່ານຈະໃຊ້ໄດ້-** ທ່ານຕ້ອງຂຽນບັດ ເລືອກຕັ້ງໃຫ້ຄັກແນ່. ກະຣຸນາເບິ່ງຂໍ້ມູນຢູ່ໃນໜ້າສຸດທ້າຍ ເຮັດແນວໃດການລົງ ຄະແນນສຽງຈະໃຫ້ຖືກຕ້ອງຄັກແນ່

# ລົງຄະແນນສຽງໃນມື້ທີ່ບົ່ງໄວ້

ວິທີລົງຄະແນນສຽງທີ່ງ່າຍທີ່ສຸດ ແມ່ນໄປສະຖານທີ່ປ່ອນບັດເລືອກຕັ້ງ ໃນເຂດເລືອກຕັ້ງ ຂອງທ່ານຢູ່ ໃນ**ວັນເສົາ ວັນທີ 21 ສິງຫາ 2010**.

ຖ້າວ່າທ່ານຢູ່ໃນຣັຖຂອງທ່ານ ຫຼືວ່າ ຢູ່ໃນເຂດປົກຄອງ ໃນມື້ປ່ອນບັດເລືອກຕັ້ງນັ້ນ, ແຕ່ທ່ານບໍ່ຢູ່ໃນເຂດເລືອກຕັ້ງ, ທ່ານກໍຍັງສາມາດປ່ອນບັດເລືອກຕັ້ງ ໃນເຂດອື່ນໄດ້.

ສະຖານທີ່ປ່ອນບັດເລືອກຕັ້ງທຸກໆບ່ອນ ຈະເປີດຕັ້ງແຕ່ **8.00 ໂມງເຊົ້າ** ແລະປິດ **6.00 ໂມງແລງ** ຕົງ.

ເພື່ອຈະຊອກຫາບ່ອນເລືອກຕັ້ງ ໃຊ້ "ຊີ້ທາງ" ຫາບ່ອນເລືອກຕັ້ງໃນ **www.aec.gov.au** ສະຖານທີ່ປ່ອນບັດເລືອກຕັ້ງ ຍັງຈະໄດ້ແຈ້ງຂ່າວ ໃນໜ້າໜັງສືພິມສຳຄັນເປັນພາສາອັງກິດ ຂອງໂຕເມືອງໃຫຍ່ ໃນວັນສຸກກ່ອນໜ້າວັນເລືອກຕັ້ງ.

ປະຊາຊົນຈຳນວນໜຶ່ງອາດຈະຈົດທະບຽນເລືອກຕັ້ງໃນສະຖານທີ່ຕ່າງກັບ ການເລືອກຖັ້ງກ່ອນ ເນື່ອງດ້ວຍວ່າ ເຂດການເລືອກຕັ້ງມີການປ່ຽນແປງ. ເພື່ອຢາກກວດເບິ່ງເຂດການເລືອກຕັ້ງຂອງທ່ານ ກະຣຸນາໂທຫາເບີ **1300 720 153** ຫຼື ໄປເບິ່ງແວບໄຊຕ໌ **www.aec.gov.au**

ໃນມື້ເລືອກຕັ້ງ ຖ້າຫາກວ່າທ່ານບໍ່ສາມາດໄປສະຖານທີ່ເລືອກຕັ້ງໃນຣັຖທ່ານຢູ່ ຫຼືວ່າ ໃນເຂດປົກຄອງ ທ່ານກໍຍັງສາມາດເຮັດໃຫ້ຄະແນນສຽງຂອງທ່ານໃຊ້ໄດ້. ກະຣຸນາ ເບິ່ງຂໍ້ມູນ ໜ້າ 4.

# ບໍ່ສາມາດໄປປ່ອນເລືອກຕັ້ງໄດ້

## ຢູ່ນອກຣັຖທີ່ທ່ານຢູ່

ຖ້າທ່ານຈະຢູ່ນອກຣັຖຂອງທ່ານ ຫຼືເຂດປົກຄອງ ໃນມື້ເລືອກຕັ້ງນັ້ນ, ມັນສຳຄັນທີ່ທ່ານຕ້ອງຮູ້ວ່າ ຈະໄປປ່ອນບັດເລືອກຕັ້ງໃນທຸກສະຖານທີ່ບໍ່ໄດ້. ໃນມື້ເລືອກຕັ້ງ ນັ້ນທ່ານສາມາດປ່ອນບັດເລືອກຕັ້ງໄດ້ ແຕ່ໃນສະຖານທີ່ງ ປ່ອນບັດຈັດໄວ້ສຳລັບຕ່າງຣັຖ. ແຕ່ເຖິງຢ່າງໃດກໍດີ ທ່ານສາມາດ ລົງຄະແນນ ສຽງໄດ້ລ່ວງໜ້າຢູ່ໃນສະຖານທີ່ເລືອກຕັ້ງ ຫຼື ຢູ່ໃນຫ້ອງການ ຂອງກັມມະການກຳກັບການເລືອກຕັ້ງ AEC. ນອກນັ້ນທ່ານຍັງສາມາດ ລົງຄະແນນສຽງລ່ວງໜ້າທາງໄປສະນີໄດ້.

## ໄປນອກປະເທດ

ຖ້າວ່າທ່ານໄປປະເທດນອກ ທ່ານສາມາດລົງຄະແນນສຽງທາງໄປສະນີ ຫຼືວ່າ ໄປລົງສຽງດ້ວຍຕົນ ເອງທີ່ສະຖານເອກອັກຄະຣາຊທູດອອສເຕຣເລັຍ ຫຼື ສະຖານທີ່ຕາງໜ້າປະເທດ ຢູ່ນອກປະເທດ ດ້ວຍຕົນເອງ. ກ່ອນຈະໄປຈົ່ງກວດເບິ່ງຄັກແນ່. ຂໍ້ມູນຕິດຕໍ່ສະຖານທູດມີຢູ່ໃນແອບໄຊຕ໌ www.dfat.gov.au. ອີກຢ່າງໜຶ່ງ ທ່ານສາມາດລົງຄະແນນສຽງເລືອກຕັ້ງໄດ້ ກ່ອນເດີນ ທາງອອກຈາກອອສເຕຣເລັຍຢູ່ສະຖານທີ່ລົງຄະແນນສຽງລ່ວງໜ້າ ຫຼື ທາງໄປສະນີ.

## ໃນເຂດສອກຫຼີກ

ມີຄະນະຮັບຜິດຊອບການເລືອກຕັ້ງ ໄປຍັງເຂດສອກຫຼີກ. ກະຣຸນາກວດເບິ່ງ ໃນປ້າຍ ຂ່າວຂອງເທສ ບານທ້ອງຖິ່ນ, ຈົ່ງຟັງວິທຍຸ, ອ່ານໜັງສືພິມທ້ອງຖິ່ນ ເພື່ອຮູ້ວັນເວລາ ຂອງການເລືອກຕັ້ງ ຫຼື ບໍ່ດັ່ງນັ້ນ ຕິດຕໍ່ກັມມະການເລືອກຕັ້ງ AEC.

## ຢູ່ໃນໂຮງພຍາບານ ຫຼື ເຮືອນຜູ້ເຖົ້າ

ຄະນະຮັບຜິດຊອບການເລືອກຕັ້ງຈະໄປຢ້ຽມໂຮງພຍາບານ ແລະເຮືອນຜູ້ເຖົ້າ ກ່ອນຈະຮອດມື້ ຫຼື ໃນມື້ເລືອກຕັ້ງ. ຖ້າຫາກວ່າໂຮງພຍາບານ ຫຼື ເຮືອນຜູ້ເຖົ້າ ຂອງທ່ານບໍ່ຢູ່ໃນກໍລະນີນີ້ ທ່ານຈະຂໍລົງ ຄະແນນສຽງເລືອກຕັ້ງທາງໄປສະນີໄດ້. ພະນັກງານຫ້ອງການອາດຈະມີຄຳຂໍລົງຄະແນນສຽງ ທາງໄປສະນີ, ຫຼື ບໍ່ເຊັ່ນນັ້ນຕິດຕໍ່ໄປຍັງ AEC.

## ຢູ່ໃນຄຸກ

ຜູ້ຖືກຄຸມຂັງທີ່ປະຕິບັດໂທດສາມປີລົງມາ ມີສິດລົງຄະແນນສຽງເລືອກຕັ້ງໄດ້. ນັກໂທດສາມາດລົງ ຄະແນນສຽງທາງໄປສະນີໄດ້ ຫຼື ສາມາດໃຊ້ການບໍຣິການ ຂອງການເລືອກຕັ້ງເຄື່ອນທີ່.

# ລົງຄະແນນສຽງເລືອກຕັ້ງລ່ວງໜ້າ

ທ່ານສາມາດລົງຄະແນນສຽງກ່ອນວັນເລືອກຕັ້ງໄດ້ຖ້າວ່າ, ໃນມື້ເລືອກຕັ້ງນັ້ນ, ທ່ານບໍ່ສາມາດໄປບ່ອນເລືອກຕັ້ງໄດ້ຍ້ອນວ່າ:

- ທ່ານຢູ່ນອກເຂດເລືອກຕັ້ງທີ່ທ່ານລົງທະບຽນ
- ທ່ານຢູ່ຫ່າງຈາກບ່ອນເລືອກຕັ້ງ 8 ກິໂລແມດ
- ທ່ານກຳລັງເດີນທາງ ຫຼືວ່າ ອອກຈາກບ່ອນເຮັດວຽກໄປລົງຄະແນນສຽງບໍ່ໄດ້
- ທ່ານເຈັບປ່ວຍໜັກ, ພິການ ຫຼືວ່າ ຈະຄອດລູກ (ຫຼື ຖ້າທ່ານຫາກຮັກສາປົວຣະບັດ ຜູ້ໃດຜູ້ໜຶ່ງໃນກໍລະນີທີ່ກ່າວມານີ້)
- ທ່ານເປັນຄົນເຈັບນອນຢູ່ໂຮງພຍາບານແລະບໍ່ສາມາດປ່ອນບັດເລືອກຕັ້ງຢູ່ໃນໂຮງພຍາບານ
- ທ່ານມີຄວາມເຊື່ອຖືທາງສາສນາ ທີ່ເຮັດໃຫ້ໄປສະຖານທີ່ປ່ອນບັດເລືອກຕັ້ງບໍ່ໄດ້
- ທ່ານເປັນນັກໂທດຢູ່ໃນຄຸກຢ່າງນ້ອຍ ສາມປີ ຫຼືວ່າ ຖືກກັກຂັງ
- ທ່ານເປັນຜູ້ມີສິດເລືອກຕັ້ງງຽບ ຫຼືວ່າ ມີເຫດຜົນໃນຄວາມຢ້ານກົວຕໍ່ຄວາມປອດໄພ ຂອງທ່ານ

ຖ້າວ່າ ທ່ານມີສິດປ່ອນບັດເລືອກຕັ້ງກ່ອນ, ທ່ານກໍສາມາດລົງຄະແນນສຽງເລືອກຕັ້ງ ໄດ້ໜຶ່ງໃນສອງວິທີ:

**ໄປດ້ວຍຕົນເອງ**– ຢູ່ບ່ອນກ່ອນເລືອກຕັ້ງສະເພາະ ກ່ອນມື້ເລືອກຕັ້ງແທ້. ບ່ອນກ່ອນການເລືອກຕັ້ງນັ້ນ ເປັນບ່ອນສະດວກ ບາງບ່ອນກໍເປີດນອກໂມງການ. ທ່ານຍັງສາມາດ ປ່ອນບັດເລືອກຕັ້ງຢູ່ຫ້ອງການຂອງ AEC ໃນໂມງການໄດ້. ຢາກຊອກເບິ່ງບ່ອນ ກ່ອນການເລືອກຕັ້ງທີ່ຢູ່ໃກ້ ຫຼືຫ້ອງການ AEC ຈົ່ງເບິ່ງແວບໄຊຕ໌ **www.aec.gov.au** ຫຼື ໂທຣະສັບເບີ **1300 720 153**. ທ່ານສາມາດເບິ່ງຢູ່ໃນ ‘Australian Electoral Commission’ ປື້ມໂທຣະສັບໜ້າປົກຂາວເພື່ອຮູ້ບ່ອນຢູ່ທີ່ໃກ້ຂອງ AEC.

**ທາງໄປສະນີ**– ທ່ານລົງຄະແນນສຽງທາງໄປສະນີໄດ້ ໂດຍຂຽນຄຳຂໍ. ຄຳຂໍນັ້ນມີຢູ່ນຳຫ້ອງການໄປສະນີ, ຫ້ອງການຮັບຜິດຊອບການເລືອກຕັ້ງ ຫຼືວ່າ ເບິ່ງໃນ **www.aec.gov.au**. AEC ຕ້ອງໄດ້ຮັບຄຳຂໍລົງຄະແນນສຽງຂອງທ່ານທາງໄປສະນີ ໃນວັນພະຫັດ ວັນທີ 19 ສິງຫາ 2010 ເວລາ 6 ໂມງແລງ.

ຈົ່ງຈຳໄວ້ວ່າ ຄວນເພື່ອເວລາໄວ້ພໍສົມຄວນສຳລັບການສົ່ງບັດລົງຄະແນນສຽງມາໃຫ້ທ່ານ, ຂຽນເຈັ້ຍລົງຄະແນນສຽງໃຫ້ຄົບຖ້ວນ ແລະຈັດສົ່ງຄືນໄປຍັງຫ້ອງການຮັບຜິດຊອບການເລືອກຕັ້ງກ່ອນ 6 ໂມງແລງ ຂອງວັນເລືອກຕັ້ງນັ້ນ. ຈົ່ງສົ່ງຊອງລົງຄະແນນ ສຽງໄປທາງໄປສະນີ **ກ່ອນ** ວັນເລືອກຕັ້ງ ກ່ອນຫຼາຍມື້.

ຈົ່ງຈຳໄວ້ວ່າ: ຄຳຂໍລົງຄະແນນສຽງທາງໄປສະນີແລະບັດເລືອກຕັ້ງ ມີແຕ່ເປັນ ພາສາອັງກິດເທົ່ານັ້ນ.

# ຢູ່ສະຖານທີ່ປ່ອນບັດເລືອກຕັ້ງ

ຖ້າວ່າທ່ານຕ້ອງການ ມີຜູ້ຊ່ວຍເຫຼືອ ຢູ່ໃນສະຖານທີ່ປ່ອນບັດເລືອກຕັ້ງ. ເຈົ້າໜ້າ ທີ່ກຳກັບການເລືອກຕັ້ງມີເອກະສານເປັນພາສາລາວເພື່ອແນະນຳໃຫ້ທ່ານລົງຄະແນນສຽງໃຫ້ຖືກຕ້ອງແລະທ່ານຂໍການຊ່ວຍເຫຼືອຂຽນບັດລົງຄະແນນສຽງໄດ້. ທ່ານຈະເອົາຜູ້ໃດຜູ້ໜຶ່ງເຊັ່ນວ່າ ພີ່ນ້ອງ ຫຼື ໝູ່ເພື່ອນ, ເພື່ອຊ່ວຍ ຂຽນບັດລົງຄະແນນສຽງ-ຈົ່ງບອກໃຫ້ເຈົ້າໜ້າທີ່ຊາບເວລາທ່ານໄປຮອດສະຖານທີ່ປ່ອນບັດເລືອກຕັ້ງ.

ຢູ່ບາງສະຖານທີ່ການເລືອກຕັ້ງ ຈະມີເຈົ້າໜ້າທີ່ປາກຫຼາຍພາສານອກຈາກ ພາສາອັງກິດ.
ເຂົາເຈົ້າຈະມີປ້າຍຕິດໜ້າເອິກວ່າ ປາກໄດ້ພາສາຫຍັງແດ່.

ການເລືອກລົງຄະແນນສຽງນັ້ນ ແມ່ນການຕັດສິນໃຈຂອງທ່ານ. ຢູ່ນອກສະຖານທີ່ການເລືອກຕັ້ງຍັງມີຕົວແທນຂອງຜູ້ສມັກເລືອກຕັ້ງທີ່ອາດຈະເອົາບັດບອກວິທີເລືອກຕັ້ງແຈກ ໃຫ້ທ່ານ, ແນະນຳໃຫ້ທ່ານລົງຄະແນນສຽງດ້ວຍວິທີໃດວິທີໜຶ່ງ. ທ່ານບໍ່ຈຳເປັນ ຈະເຮັດຕາມບັດນັ້ນ.

## ສະຖານທີ່ປ່ອນບັດ

| | |
|---|---|
| ບາດກ້າວ 1 | ຢູ່ໃນສະຖານທີ່ປ່ອນບັດການເລືອກຕັ້ງ ເຈົ້າໜ້າທີ່ກຳກັບການເລືອກຕັ້ງ ຈະຖາມຊື່ເຕັມແລະບ່ອນຢູ່ຂອງທ່ານ ຈະຖາມວ່າ ທ່ານເຄີຍໄດ້ປ່ອນບັດເລືອກຕັ້ງແລ້ວບໍ ໃນການເລືອກຕັ້ງເທື່ອນີ້ ແລະກໍຈະໝາຍຊື່ຂອງທ່ານໄວ້ຢູ່ໃນບັນຊີການເລືອກຕັ້ງ. |
| ບາດກ້າວ 2 | ທ່ານຈະໄດ້ຮັບ ບັດລົງຄະແນນສຽງເລືອກຕັ້ງ ສອງ ຊຸດ- ຊຸດສີຂຽວ ແມ່ນເລືອກເອົາຜູ້ແທນສະພາຕ່ຳແລະຊຸດສີຂາວແມ່ນເລືອກເອົາຜູ້ແທນສະພາສູງ. |
| ບາດກ້າວ 3 | ອ່ານຄຳແນະນຳໃນບັດລົງຄະແນນສຽງສອງຊຸດນັ້ນໃຫ້ຄັກແນ່. ມີຫຼາຍວິທີຂຽນບັດລົງຄະແນນສຽງແຕ່ລະຊຸດ. ຈົ່ງຂໍຄວາມຊ່ວຍເຫຼືອຈາກເຈົ້າໜ້າທີ່ ຖ້າທ່ານບໍ່ແນ່ນອນໃຈ. |
| ບາດກ້າວ 4 | ຫຼັງຈາກທີ່ທ່ານຂຽນບັດລົງຄະແນນສຽງຮຽບຮ້ອຍແລ້ວ, ພັບແລ້ວເອົາບັດນັ້ນໃສ່ໃນກັບທີ່ຕຽມໄວ້ໃຫ້. |

**ຖ້າຫາກທ່ານເຮັດຜິດກໍບໍ່ເປັນຫຍັງ.**
**ຂໍເອົາບັດລົງຄະແນນສຽງໄດ້ອີກແລະກໍເຮັດໃຫມ່.**

ເບິ່ງໜ້າສຸດທ້າຍຂອງຄຳແນະນຳນີ້ ເພື່ອເປັນການຮຽນຮູ້.

ທ່ານຝຶກການລົງຄະແນນສຽງການເລືອກຕັ້ງໄດ້ໂດຍເບິ່ງແວບໄຊ໌ **www.aec.gov.au**

# ການໃຫ້ຄວາມສະດວກແກ່ຄົນພິການໃນການລົງຄະແນນສຽງ

ສະຖານທີ່ງໃຫ້ຄົນພິການລົງຄະແນນສຽງໄດ້ນັ້ນ ຈະມີໃນແວບໄຊຕ໌ແລະ ຂ່າວແຈ້ງ ໃນໜັງສືພິມ. ນອກນັ້ນຍັງມີການຈັດເປັນພິເສດຢູ່ໃນສະຖານທີ່ການເລືອກຕັ້ງ ສະເພາະບຸກຄົນທີ່ອອກຈາກລົດບໍ່ໄດ້.

ໃນການເລືອກຕັ້ງຂອງຣັຖບານກາງເທື່ອນີ້ ຜູ້ລົງຄະແນນສຽງທີ່ຕາບອດ ຫຼືວ່າ ແສງຕາຕ່ຳນັ້ນ ສາມາດເລືອກໄດ້ ໃນ 125 ແຫ່ງ ໃນບ່ອນໃດບ່ອນໜຶ່ງ ເພື່ອລົງຄະແນນສຽງທາງໂທຣະສັບ. ສະຖານທີ່ພິເສດນີ້ ຈະມີໃຫ້ກ່ອນໜ້າການເລືອກຕັ້ງ 2 ອາທິດແລະໃນມື້ເລືອກຕັ້ງ. ຖ້າຕ້ອງການຂໍ້ມູນຕື່ມອີກກ່ຽວກັບສະຖານທີ່ການເລືອກຕັ້ງ ແລະເວລາເປີດການເລືອກ ຈົ່ງເບິ່ງແວບໄຊຕ໌ **www.aec.gov.au**. ຫຼືວ່າ ໂທຣະສັບາເບີ **1300 720 153**.

ຖ້າທ່ານຫາກຫູໜວກ ຫຼືວ່າ ພິການທາງຫູ ຫຼື ປາກ ຈົ່ງຕິດຕໍ່ຜ່ານພວກເຮົາ ໄປຫາ National Relay Service: TTY ໂທຣະສັບເບີ 133 677 ແລະ ບອກ 13 23 26. ເວົ້າແລະຟັງເບີ 1300 555 727 ແລະ ບອກເບີ 13 23 26. ມີອິນເຕີເນຕຕໍ່ໃສ່ NRS ແລ້ວຖາມເບີ 13 23 26.

# ຈົ່ງຈຳໄວ້ວ່າ

ຢາກຮູ້ຂໍ້ມູນລຸ່ມນີ້ ຈົ່ງເບິ່ງ **www.aec.gov.au**. ຫຼືວ່າ ໂທຣະສັບາເບີ **1300 720 153**

- ສະຖານທີ່ໃນມື້ເລືອກຕັ້ງ
- ສະຖານທີ່ເລືອກຕັ້ງກ່ອນເວລາ
- ສະຖານທີ່ເລືອກຕັ້ງລະຫວ່າງຣັຖ
- ລາຍລະອຽດຂອງການເລືອກຕັ້ງເຄື່ອນທີ່
- ຫ້ອງການຂອງ AEC
- ຂໍ້ມູນກ່ຽວກັບການລົງຄະແນນສຽງເລືອກຕັ້ງທາງໄປສະນີ

# ເຮັດຢ່າງໃດຈະເຮັດໃຫ້ການລົງຄະແນນສຽງເລືອກຕັ້ງຂອງທ່ານໃຊ້ໄດ້?

ໃນນີ້ການເລືອກຕັ້ງ ທ່ານຈະໄດ້ຮັບ ບັດລົງຄະແນນສຽງ 2 ສະບັບ:
ບັດໜຶ່ງເປັນສີຂຽວ ສະເພາະເລືອກເອົາສະພາຕໍ່າ ແລະ ບັດໜຶ່ງເປັນສີຂາວ ສະເພາະເລືອກເອົາສະພາສູງ.

**ຖ້າຫາກທ່ານເຮັດຜິດກໍບໍ່ເປັນຫຍັງ. ຂໍເອົາບັດລົງຄະແນນສຽງໄດ້ອີກ ແລະກໍເຮັດໃຫມ່.**

## ບັດລົງຄະແນນສຽງສີຂຽວ – ເອົາ ນ້ຳເບີ ໃສ່ໃນທຸກໆຫ້ອງ

ຢູ່ໃນບັດລົງຄະແນນສຽງສີຂຽວນັ້ນ ທ່ານຕ້ອງຫມາຍເລກ '1' ໃສ່ ໃນຫ້ອງຂ້າງ ຜູ້ສມັກເລືອກຕັ້ງທີ່ທ່ານຈະເອົາເປັນຜູ້ທຳອິດ. ຫມາຍເລກ '2' ໃສ່ ໃນຫ້ອງຂ້າງ ຜູ້ສມັກເລືອກຕັ້ງທີ່ທ່ານຈະເອົາທີເປັນຜູ້ທີສອງ ແລະຫມາຍຕໍ່ໆກັນໄປ ຈົນກວ່າທ່ານຈະຫມາຍຄົບທຸກໆຫ້ອງ.

**ທ່ານຕ້ອງຫມາຍ ນ້ຳເບີ ໃສ່ທຸກໆຫ້ອງ ເພື່ອໃຫ້ການລົງຄະແນນສຽງຂອງທ່ານໃຊ້ໄດ້**

ບໍ່ຕ້ອງໃຊ້ ຂີດ, ຫມາຍກາ, ຫຼື ປະຫ້ອງຫວ່າງ ຢູ່ໃນບັດເລືອກຕັ້ງ ຫຼື ບໍ່ດັ່ງນັ້ນ ການອອກຄະແນນສຽງຂອງທ່ານຈະໃຊ້ບໍ່ໄດ້.




ຕົວຢ່າງ

## ບັດເລືອກຕັ້ງສີຂາວ – ການເລືອກຕັ້ງ ມີ 2 ວິທີ

ຢູ່ບັດເລືອກຕັ້ງສີຂາວ ທ່ານເລືອກລົງຄະແນນສຽງໄດ້:

**ດ້ວຍວິທີໃດວິທີຫນຶ່ງ**

### ຢູ່ເທິງເສັ້ນຫມາຍ

ທ່ານສາມາດຫມາຍ '1' ຢູ່ໃນຫ້ອງເທິງເສັ້ນຫມາຍສະເພາະ ພັກການເມືອງ ຫຼື ກຸ່ມການເມືອງ ທີ່ທ່ານຈະເລືອກເອົາ. ການເຮັດເຊັ່ນນັ້ນ ຫມາຍຄວາມວ່າ ການອອກສຽງຂອງທ່ານ ກັບພັກການເມືອງ ຫຼື ກຸ່ມການເມືອງ. ຖ້າທ່ານຕ້ອງການຂໍ້ມູນຕື່ມ ຈົ່ງໄປເບິ່ງຢູ່ໃນ ແວບໄຊທ໌ www.aec.gov.au




ຕົວຢ່າງ

**ຫຼື**

### ຢູ່ລຸ່ມເສັ້ນຫມາຍ

ທ່ານສາມາດລົງຄະແນນສຽງ ໂດຍການຫມາຍທຸກຫ້ອງຢູ່ລຸ່ມເສັ້ນຫມາຍໄດ້ ຕາມຄວາມປະສົງຂອງທ່ານ. ທ່ານຕ້ອງຫມາຍ '1' ຢູ່ໃນຫ້ອງຂ້າງຜູ້ສມັກເລືອກຕັ້ງ ທີ່ທ່ານຈະເລືອກເອົາເປັນຜູ້ທຳອິດ, ຫມາຍ '2' ຢູ່ໃນຫ້ອງຂ້າງທີ່ທ່ານຈະເລືອກ ເອົາລະດັບສອງ ແລະຕໍ່ໆກັນໄປ ຈົນກວ່າ ທ່ານຈະຫມາຍເລກໃສ່ທຸກໆຫ້ອງ.

**ທ່ານຕ້ອງຫມາຍນ້ຳເບີໃສ່ທຸກໆຫ້ອງເພື່ອໃຫ້ການລົງຄະແນນເລືອກຕັ້ງໃຊ້ໄດ້.**




ຕົວຢ່າງ

AEC0121